## 2. ບັນດາສິ່ງທີ່ຄວນເອົາໃຈໃສ່ໃນເມື່ອຂໍຢັ້ງຢືນໃບສົມລົດຂອງລາວ

1. ໜັງສືຢັ້ງຢືນການສົມລົດເປັນພາສາລາວຕົ້ນສະບັບ ແລະ ສະບັບແປໜັງສືຢັ້ງຢືນການສົມລົດປະກອບມີຕົ້ນສະບັບ 1 ສະບັບ ພ້ອມກັບສະບັບອັດສຳເນົາ 1 ສະບັບ (ຕົ້ນສະບັບ ແລະ ສະບັບແປຕ້ອງໄດ້ປະທັບກາໃສ່ເຈ້ຍສອງ ໃບຕໍ່ກັນຂອງອົງການທີ່ກ່ຽວຂ້ອງຢູ່ລາວ), ທັງສະບັບເປັນພາສາລາວ ແລະ ສະບັບແປລ້ວນແຕ່ຕ້ອງໄດ້ກະຊວງການຕ່າງປະເທດລາວ ແລະ ສະຖານທູດລາວປະຈຳຫວຽດນາມຢັ້ງຢືນ.
2. ຖ້າລູກເກີດມາແຕ່ເວລາຜູ້ເປັນພໍ່ແມ່ຍັງບໍ່ທັນມີໃບສົມລົດ, ຫຼື ເກີດກ່ອນເວລາຜູ້ເປັນພໍ່ແມ່ແຕ່ງດອງ ຫຼື ລູກໄດ້ຕັ້ງຄັນກ່ອນທີ່ການສົມລົດຂອງຜູ້ເປັນພໍ່ແມ່ມີຜົນສັກສິດນັ້ນ ຜູ້ເປັນແມ່ຕ້ອງມີໜັງສືຢັ້ງຢືນສະພາບການແຕ່ງດອງໃນເວລາຕັ້ງຄັນມາພ້ອມ (ອີງໃສ່ການກຳນົດຢູ່ຂໍ້ 1 ມາດຕາ 1062 ກົດໝາຍແພ່ງໃຕ້ຫວັນ: ເວລາແຕ່ 181 ວັນເຖິງ 302 ວັນນັບຖອຍຫຼັງແຕ່ວັນລູກໄດ້ເກີດມານັ້ນ ໄດ້ເອີ້ນວ່າເວລາຕັ້ງຄັນ), ໜັງສືຢັ້ງຢືນ DNA, ໜັງສືຕັດສິນຂອງສານລາວ ແລະ ອື່ນໆ ເພື່ອສະໜອງໃຫ້ບັນດາອົງການທີ່ກ່ຽວຂ້ອງຢູ່ໃຕ້ຫວັນ.
3. ຜູ້ເປັນພໍ່ ຫຼື ເປັນແມ່ຂອງເດັກນ້ອຍສາມາດຖືໜັງສືຢືນຢັນຖານະຂອງຕົນປະກອບມີຕົ້ນສະບັບ 1 ສະບັບ ແລະ ສະບັບອັດສຳເນົາ 1 ສະບັບມາຫາຫ້ອງ ການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມຂໍຢັ້ງຢືນ, ຖ້າເປັນຄົນໃນຄອບຄົວຂໍຢັ້ງຢືນໜັງສືແທນຕ້ອງຍື່ນໜັງສືຢືນຢັນສາຍພົວພັນ ປະກອບມີຕົ້ນສະບັບ 1 ສະບັບ ແລະ ສະບັບອັດສຳເນົາ 1 ສະບັບ (ຕົວຢ່າງ: ປື້ມສຳມະໂນຄົວ). ຖ້າມອບສິດໃຫ້ຜູ້ອື່ນເຮັດແທນນັ້ນ ຕ້ອງມີໃບມອບສິດທີ່ໄດ້ກະຊວງການຕ່າງປະເທດລາວ ແລະ ສະຖານທູດລາວປະຈຳຫວຽດ

ນາມ ຢັ້ງຢືນ ຫຼື ໃບມອບສິດທີ່ໄດ້ພະນັກງານທະບຽນເອກະສານໃຕ້ຫວັນ ຢັ້ງຢືນທີ່ຖືກຕ້ອງຕາມຄວາມເປັນຈິງ ແລະ ໄດ້ກົມກົງສູນ-ກະຊວງການຕ່າງປະເທດໃຕ້ຫວັນ ກວດກາຄືນມາແລ້ວ, ພ້ອມກັບໜັງສືຢືນຢັນຖານະຂອງຜູ້ມອບສິດສະບັບອັດສຳເນົາ 1 ສະບັບ ແລະ ໜັງສືຢືນຢັນຖານະຂອງຜູ້ໄດ້ມອບສິດຕົ້ນສະບັບ 1 ສະບັບ, ສະບັບອັດສຳເນົາ 1 ສະບັບ.

4. ຕື່ມຂໍ້ມູນເຂົ້າໃນແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ລົງລາຍເຊັນຢູ່ໃນໃບຄຳຮ້ອງຂໍຢັ້ງຢືນໜັງສື (ປະກອບມີເບີໂທລະສັບຢູ່ລາວ ເພື່ອສະດວກໃຫ້ແກ່ການແຈ້ງປະກອບເອກະສານຕື່ມ).
5. ນອກຈາກໜັງສືຕົ້ນຕໍຕ່າງໆແລ້ວ, ເມື່ອມີຄວາມຕ້ອງຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມ ອາດຈະຮຽກຮ້ອງຜູ້ກ່ຽວສະໜອງບັນດາເອກະສານອື່ນຕື່ມອີກ ເພື່ອພິຈາລະນາຮັບຮອງເອົາສຳນວນເອກະສານ. ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຢູ່ຫວຽດນາມ ບໍ່ມີການບໍລິການແປເອກະສານພາສາລາວ/ພາສາຈີນ, ບໍ່ມີການບໍລິການສົ່ງໜັງສືຜ່ານທາງໄປສະນີ.
6. ຄ່າທຳນຽມ: ໜັງສືເຮັດທຳມະດາມີຄ່າທຳນຽມແມ່ນ 15 ໂດລາສະຫະລັດ/ສະບັບໜຶ່ງ ແລະ ເວລາຮັບສຳນວນເອກະສານແກ້ໄຂແມ່ນ 04 ວັນລັດຖະການ (ຕົວຢ່າງ: ຮັບເອົາສຳນວນເອກະສານໃນວັນຈັນ, ຕອນແລງວັນສຸກຈະສົ່ງສຳນວນເອກະສານຄືນ); ໜັງສືເຮັດດ່ວນມີຄ່າທຳນຽມແມ່ນ 22.5 ໂດລາສະຫະລັດ/ສະບັບໜຶ່ງ ແລະ ເວລາຮັບສຳນວນເອກະສານແກ້ໄຂແມ່ນ 02 ວັນລັດຖະການ. ຖ້າຕ້ອງການຢັ້ງຢືນສະບັບອັດສຳເນົາຕື່ມອີກ, ແຕ່ລະສະບັບອັດສຳເນົານັ້ນຈະມີຄ່າທຳນຽມເທົ່າກັບ 50% ຂອງຕົ້ນສະບັບ (ໃນກໍລະນີເງິນບໍ່ຮອດ 1 ໂດລາສະຫະລັດ, ໃຫ້ຈ່າຍເປັນເງິນຫວຽດນາມທີ່ມີຄຸນຄ່າທຽບເທົ່າ). ຖ້າຜູ້ຢັ້ງຢືນ

ໜັງສືຂໍລົບລ້າງການຢັ້ງຢືນ ຫຼື ການຢັ້ງຢືນບໍ່ສາມາດປະຕິບັດໄດ້ຍ້ອນມີຄວາມຜິດພາດຂອງຜູ້ຂໍຢັ້ງຢືນເອງ, ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມຈະບໍ່ສົ່ງຄືນຄ່າທຳນຽມທີ່ໄດ້ເກັບມາແລ້ວ.

7. ເວລາເຮັດວຽກ: ແຕ່ວັນຈັນ ເຖິງ ວັນສຸກ (ຍົກເວັ້ນວັນບຸນ, ປີໃໝ່, ກຸດທີ່ໄດ້ພັກຕາມກຳນົດ)

   ຮັບແກ້ໄຂເອກະສານ: ແຕ່ 8:30 ເຖິງ 12:00

   ສົ່ງຜົນແກ້ເອກະສານ: ແຕ່ 14:00 ເຖິງ 16:00 (ໃນກໍລະນີເກີດມີບັນຫາຕິດຄັດເຄື່ອງຈັກຄອມພິວເຕີ ຫຼື ເຄືອຂ່າຍອິນເຕີເນັດອາດຈະເລີກການຊ້າກວ່າ)

8. ທີ່ຢູ່: ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມ

   ຊັ້ນ 5, ຕຶກ HITC, ເລກທີ 239 ຖະໜົນຊວັນທຸຍ, ເມືອງເກົ່າເຢີຍ, ນະຄອນຫຼວງຮ່າໂນ້ຍ

   ເບີໂທ: 84-24-38335502~04 (ຕໍ່) 130

   ແຟັກ: 84-24-38336621

ເອກະສານເປັນພາສາລາວເຊັ່ນໃບຢັ້ງຢືນການສົມລົດ, ໃບຢັ້ງຢືນຄວາມເປັນໂສດ, ໃບຢັ້ງຢືນ DNA, ໜັງສືຕັດສິນຂອງສານລາວ, ໃບມອບສິດ ແລະ ອື່ນໆ ລ້ວນແຕ່ຕ້ອງໄດ້ຜ່ານການຢັ້ງຢືນຂອງກະຊວງການຕ່າງປະເທດລາວ ແລະ ສະຖານທູດລາວປະຈຳຫວຽດນາມ.

ວັນທີ update: 14/12/2017